**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສະຖານເອກອັກຄະລັດຖະທູດ
ແຫ່ງ ສປປ ລາວ
ທີ່ ແບກແລັງ

*Embassy of the Lao PDR*
*Bismarckallee 2A, 14193 Berlin*
*Tel: 030/89060647; Fax: 030/89060648*

# <u>ແຈ້ງຂ່າວ</u>

ເຖິງ: ພົນລະເມືອງລາວທຸກຄົນ ທີ່ ພຳນັກອາໄສຢູ່ຕ່າງປະເທດ

ສະຖານທູດ ຂໍແຈ້ງຂ່າວໃຫ້ບຸກຄົນ ທີ່ຖືສັນຊາດລາວທຸກຄົນ ທີ່ດຳລົງຊີວິດ ຢູ່ປະເທດເຢຍລະມັນ, ໂປໂລຍ, ສາທາລະນະລັດເຊັກ, ລິທົວເນຍ ແລະ ລັດເວຍ ຊາບທົ່ວເຖິງກັນ ກ່ຽວກັບບາງບັນຫາທີ່ກ່ຽວພັນ ເຖິງຕົວຂອງທ່ານເອງ ດັ່ງນີ້:

**1. <u>ການອອກໜັງສືຜ່ານແດນໃໝ່</u>**

ອ້າງເຖິງແຈ້ງການ ຂອງ ສຳນັກງານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເລກທີ: 1643/ຫສນຍ.ລຂ. ລົງວັນທີ 13.11.2002. ກົມກົງສຸນກະຊວງການຕ່າງປະເທດ ທີ່ວຽງຈັນ ໄດ້ເລີ່ມນຳໃຊ້ໜັງສືຜ່ານແດນ ແບບໃໝ່ ສຳລັບພົນລະເມືອງລາວ ນັບແຕ່ເດືອນທັນວາ 2002 ເປັນຕົ້ນມາ. ສຳລັບໜັງສືຜ່ານແດນ ແບບເກົ່າແມ່ນຍັງ ສາມາດສືບຕໍ່ນຳໃຊ້ໄດ້ຈົນກວ່າຈະໝົດອາຍຸ.

ສຳລັບ ການອອກໜັງສືຜ່ານແດນຫົວໃໝ່ ຈະແມ່ນກົມກົງສຸນ, ກະຊວງການຕ່າງປະເທດ ທີ່ນະຄອນ ວຽງຈັນ ເທົ່ານັ້ນ ເປັນຜູ້ອອກໃຫ້ ໂດຍຈະໃຊ້ເວລາດຳເນີນການ ຢູ່ລາວປະມານ 30 ມື້. ສ່ວນ, ສະຖານທູດຈະບໍ່ມີ ສິດອອກໜັງສື ດັ່ງກ່າວໃຫ້ໄດ້, ພຽງແຕ່ຈະໄດ້ກວດກາ ແລະ ພິຈາລະນາ ນຳສົ່ງຄຳຮ້ອງໄປຍັງກົມກົງສຸນ, ກະຊວງການຕ່າງປະເທດ ທີ່ນະຄອນວຽງຈັນ ເທົ່ານັ້ນ.

ດ້ວຍເຫດນີ້,ຈິ່ງຂໍຄວາມຮ່ວມມືນຳທຸກທ່ານ ໃຫ້ເອົາໃຈໃສ່ຕິດຕາມ ອາຍຸໜັງສືຜ່ານແດນ ຂອງຕົນ, ກ່ອນ ຈະໝົດອາຍຸ 8 ເດືອນ ໃຫ້ທ່ານປະກອບຄຳຮ້ອງ ເພື່ອຂໍຫົວໃໝ່ ໂດຍຜ່ານສະຖານທູດ (ຫລີກເວັ້ນການຂໍດ່ວນ, ເມື່ອເກີດບັນຫາຕາມມາ ສະຖານທູດ ຈະບໍ່ສາມາດແກ້ໄຂຊ່ວຍໄດ້).

**2. <u>ການປັບປຸງຄ່າທຳນຽມຕ່າງໆ</u>**

ເພື່ອໃຫ້ສອດຄ່ອງ ກັບສະພາບຄວາມເປັນຈິງ ທາງດ້ານງົບປະມານ ໃນການພິຈາລະນາອອກເອກະສານ ຕ່າງໆ ໃນໄລຍະໃໝ່, ແລະ ເພື່ອໃຫ້ທຸກຄົນມີຄວາມເອົາໃຈໃສ່ ໃນການຮັກສາໜັງສືຜ່ານແດນ, ບັດກົງສຸນ ຕະຫລອດຮອດ ເອກະສານປະຈຳຕົວຕ່າງໆ ທີ່ສຳຄັນຂອງຕົນ ບໍ່ໃຫ້ຕົກເຮ່ຍເສຍຫາຍ, ເປິະເປື້ອນ ຫລື ຈີກຂາດ, ສະຖານທູດ ໄດ້ປັບປຸງຄ່າທຳນຽມຕ່າງໆ ໃຫ້ແທດເໝາະ ໃນໄລຍະໃໝ່, ດັ່ງນີ້:

1. ຄ່າອອກໜັງສືຜ່ານແດນຫົວໃໝ່..........................................................................50 ຢູໂຣ
2. ຕໍ່ອາຍຸໜັງສືຜ່ານແດນ......................................................................................20 ຢູໂຣ
3. ອອກບັດກົງສຸນ...............................................................................................20 ຢູໂຣ
4. ຕໍ່ອາຍຸບັດກົງສຸນ............................................................................................10 ຢູໂຣ
5. ອອກໃບເດີນທາງ.............................................................................................20 ຢູໂຣ
6. ໜັງສືອະນຸຍາດແຕ່ງດອງ....................................................................................50 ຢູໂຣ

7. ປ່ຽນນາມສະກຸນ.................................................................................................20 ຢູໂຣ

(ໃນການປະກອບເອກະສານ, ທ່ານສາມາດເອົາຄຳຮ້ອງຕ່າງໆຈາກ *Website* ຂອງສະຖານທູດ www.laos-botschaft.de ຫລື E- mail : info@laos-botschaft.de ໂດຍບໍ່ຕ້ອງເສຍຄ່າໄປສະນີສົ່ງໄປຂໍນຳສະຖານທູດຕື່ມອີກ, ຖ້າຫາກເຫັນວ່າຜູ້ໄດຍັງບໍ່ທັນມີ ກໍ່ຂໍໃຫ້ທ່ານແນະນຳ ແລະ ແຈ້ງຕໍ່ກັນໄປເພື່ອໃຫ້ຮູ້ໄວ້.)

## 3. ການແຈ້ງຂື້ນທະບຽນກົງສຸນນຳສະຖານທູດ

ໃນໄລຍະຜ່ານມາ ສະຖານທູດ ໄດ້ຮັບຄວາມຮ່ວມມືດີພໍສົມຄວນ ຈາກຫລາຍທ່ານ ໃນການແຈ້ງຂື້ນທະບຽນນຳສະຖານທູດ. ການມາຂື້ນທະບຽນກົງສຸນ ແມ່ນມີຄວາມສຳຄັນທີ່ສຸດ, ເພາະ ທາງສະຖານທູດ ຈະສາມາດກຳໄດ້ ໃນເວລາເກີດມີບັນຫາ, ການຂື້ນທະບຽນ ແລະ ມາເຮັດບັດກົງສຸນຈະເປັນເງື່ອນໄຂນຶ່ງທີ່ສຳຄັນ ສຳລັບທ່ານໃນການ ມາປະກອບເອກະສານຕ່າງໆ ນຳສະຖານທູດ ຫລື ຕ້ອງການຄວາມຊ່ວຍເຫລືອອື່ນໆ. ສະຖານທູດຈະພິຈາລະນາແກ້ ໄຂ ແລະໃຫ້ຄວາມສະດວກຕ່າງໆ ຕໍ່ຜູ້ທີ່ມາຂື້ນທະບຽນກົງສຸນກ່ອນເທົ່ານັ້ນ. ສະຖານທູດຈະບໍ່ສາມາດຮັບພິຈາລະນາແກ້ໄຂ ເອກະສານໃດໆ ໃຫ້ແກ່ບຸກຄົນທີ່ບໍ່ໄດ້ມາຂື້ນທະບຽນນຳສະຖານທູດ ຫລືບໍ່ເອົາໃຈໃສ່ຕໍ່ເອກະສານຂອງຕົນເອງ ປະປ່ອຍໃຫ້ຫມົດກຳນົດ ແລະ ມີບັນຫາຕາມມາ.

ດັ່ງນັ້ນ, ຈຶ່ງຂໍຄວາມກະລຸນາຊ່ວຍແຈ້ງຕໍ່ໆກັນວ່າ ພົນລະເມືອງລາວ ທີ່ເດີນທາງມາຍັງ 5 ປະເທດທີ່ໄດ້ກ່າວໄວ້ຂ້າງເທິງ, ຖ້າຫາກໄດ້ຮັບອານຸຍາດ ໃຫ້ຢູ່ພຳນັກອາໃສ ໃນຕ່າງປະເທດກາຍ 6 ເດືອນຂື້ນໄປຂໍໃຫ້ມາແຈ້ງຂື້ນທະບຽນກົງສຸນ ນຳສະຖານທູດລາວ ຢູ່ແບກແລັງ, ສະຖານທູດຈະໄດ້ອອກບັດກົງສູນໃຫ້ ເຊິ່ງແມ່ນບັດປະຈຳຕົວພົນລະເມືອງລາວ ທີ່ອາໃສຢູ່ຕ່າງປະເທດ, ໃຊ້ເພື່ອເປັນເອກະສານອ້າງອີງ ໃນການພົວພັນນຳ ເຈົ້າຫນ້າທີ່ທາງການຂອງລາວ ຫລືໃຊ້ເປັນຫລັກຖານ ຕໍ່ເຈົ້າຫນ້າທີ່ທ້ອງຖິ່ນ ໃນເວລາກັບ ເມືອຢາມບ້ານເກີດເມືອງນອນ

## 4. ການຂໍອະນຸຍາດແຕ່ງດອງກັບຄົນຕ່າງປະເທດ ຫລື ຄົນເຊື້ອຊາດລາວແຕ່ຖືສັນຊາດຂອງປະເທດທີ່ອາໃສຢູ່

ຜ່ານມາ ມີຫລາຍຄົນໄດ້ປະຕິບັດ ລະບຽບກົດຫມາຍຂອງລາວ ໄດ້ດີສົມຄວນ ໃນການຂໍອະນຸຍາດ ແຕ່ງດອງກັບຄົນຕ່າງປະເທດ ຫລື ຄົນເຊື້ອຊາດລາວ ແຕ່ຖືສັນຊາດຂອງປະເທດທີ່ອາໃສຢູ່, ແຕ່ກໍ່ຍັງມີບາງຈຳນວນທີ່ມາຢ້ຽມຢາມຫມູ່ເພື່ອນ ຫລື ພີ່ນ້ອງແລ້ວ ຖືໂອກາດແຕ່ງດອງເລີຍ ໂດຍບໍ່ໄດ້ຂໍອະນຸຍາດ ຈາກເຈົ້າຫນ້າທີ່ທາງການລາວ ມາກ່ອນ.

ດັ່ງນັ້ນ,ຈຶ່ງຂໍໃຫ້ທ່ານ ທີ່ຍັງບໍ່ທັນໄດ້ຂໍອະນຸຍາດ ແຕ່ງດອງຈົ່ງໄປປະກອບເອກະສານຄົບຊຸດ ຕາມລະບຽບການ ທັ້ງນີ້ກໍ່ເພື່ອປົກປ້ອງກຽດສັກສີ ແລະ ຜົນປະໂຫຍດຂອງຄົນລາວເຮົາ, ໂດຍສະເພາະ ແມ່ນຜູ້ຍິງລາວ. ຜູ້ຊາຍທີ່ຈະມາເປັນສາມີ ຕ້ອງຮັບປະກັນວ່າ ບໍ່ມີພັນທະກັບຍິງອື່ນ, ເປັນຄົນບໍ່ມີໂທດຕິດຕົວ, ມີຖານະເສດຖະກິດພຽງພໍທີ່ຈະດູແລ ຜູ້ເປັນເມຍ ໄດ້ດີ ຫລື ບໍ່ຫລອກລວງ ໄປໃນທາງທີ່ບໍ່ດີຜິດກົດຫມາຍ.

ການໄດ້ຮັບອະນຸຍາດແຕ່ງດອງ ຈາກສະຖານທູດ ຈະມີຜົນດີຕໍ່ທ່ານ ໃນການປ່ຽນນາມສະກຸນ ຕາມສາມີໃສ່ໃນຫນັງສືຜ່ານແດນ ແລະ ການໄດ້ຮັບຄວາມສະດວກ ໃນການພຳນັກອາໃສ ຢູ່ຕ່າງປະເທດ ໄລຍະຍາວ.

ສະຖານທູດ ຫວັງວ່າ ຈະໄດ້ຮັບຄວາມຮ່ວມມືເປັນຢ່າງດີຈາກທຸກທ່ານ.

ແບກແລັງ, ວັນທີ 29.11.2011.